

# ການເລັ່ງຟື້ນຟູການຮຽນຮູ້ໃນ ສະພາບການ ໂຄວິດ-19

ກອງປະຊຸມສຸດຍອດ ວ່າດ້ວຍຊັບສິນດ້ານມະນຸດ 2023

ຄັ້ງວັນທີ 25 ພຶດສະພາ 2023 | ນະຄອນຫຼວງວຽງຈັນ




## ສ ປປ ລາວໄດ້ສະແດງໃຫ້ເຫັນຄວາມມຸ່ງໝັ້ນ ອັນໜັກແໜ້ນຕໍ່ການສຶກສາຂັ້ນພື້ນຖານໃນຫຼາຍ ປີຜ່ານມາ

- ສປປ ລາວໄດ້ບັນຈຸເອົາ ເປົ້າໝາຍການພັດທະນາ ແບບຍືນຍົງ ກ່ຽວກັບການສຶກສາຂັ້ນພື້ນຖານ ເຂົ້າໃນ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9
- ໃນປີ 2017 ອັດຕາເຂົ້າຮຽນສຸດທິຊັ້ນປະຖົມສຶກສາ ບັນລຸ 98.7%.
- ໃນປີ 2019, ໄດ້ລົງນາມໃນສົນທິສັນຍາກ່ຽວກັບ ສິດທິເດັກ ໃນຄຳໝາຍໝັ້ນສາກົນຄົບຮອບ 30ປີ
- ໃນປີ 2020, ໄດ້ເຂົ້າຮ່ວມໂຄງການຊັບສິນດ້ານ ມະນຸດຂອງທະນາຄານໂລກ
- ໃນປີ 2022, ໄດ້ມີຖະແຫຼງການກ່ຽວກັບການສຶກສາ ຢູ່ໃນກອງປະຊຸມສຸດຍອດການຫັນປ່ຽນການສຶກສາ ຂອງສະຫະປະຊາຊາດ



# ການເຂົ້າເຖິງການສຶກສາຊັ້ນປະຖົມແມ່ນມີຄວາມທົ່ວເຖິງ, ແຕ່ຜົນການຮຽນຂອງນັກຮຽນແມ່ນຍັງຕໍ່າ

- ຜົນໄດ້ຮັບຂອງ ການປະເມີນ SEA-PLM ໃນ ປີ 2019 ສະແດງໃຫ້ເຫັນວ່າ 98 ເປີເຊັນຂອງເດັກນ້ອຍ ຊັ້ນ ປ.5 (ໃນກຸ່ມຕົວຢ່າງ) ບໍ່ສາມາດອ່ານ ແລະ ເຂົ້າໃຈຂໍ້ຄວາມຂອງບົດອ່ານ ໃນຫຼັກສູດການຮຽນຂອງເຂົາເຈົ້າ ແລະ 92 ເປີເຊັນ ຍັງບໍ່ທັນຮູ້ທັກສະທາງຄະນິດສາດພື້ນຖານ (ຕາມມາດຕະຖານຂອງ SDG 4.1.1b)
  - ຜົນການຮຽນຂອງນັກຮຽນ ໃນ ສປປ ລາວ ແມ່ນຕໍ່າກວ່າຜົນການຮຽນ ຢູ່ບັນດາປະເທດໃນພາກພື້ນ
  - ເດັກນ້ອຍທີ່ດ້ອຍໂອກາດ ແລະ ເດັກຈາກຄອບຄົວທຸກຍາກ ມີຜົນການຮຽນທີ່ຕໍ່າກວ່າ ເມື່ອທຽບໃສ່ກັບຄົນອື່ນໆ.



# ໂຄວິດ-19 ເຮັດໃຫ້ເກີດສິ່ງກີດຂວາງທີ່ບໍ່ເຄີຍມີມາກ່ອນ ຕໍ່ກັບໂຮງຮຽນໃນທົ່ວໂລກ

ການປິດໂຮງຮຽນ ເປັນເວລາດົນນານ ໄດ້ຂັດຂວາງ ເສັ້ນທາງການຮຽນຮູ້ ຂອງນັກຮຽນ ຫ້ອງກຽມປະຖົມ ແລະຊັ້ນປະຖົມສຶກສາ ໄປຫາມັດທະຍົມສຶກສາ ປະມານ 1.6 ລ້ານຄົນ ໃນ ສປປ ລາວ, ແຕ່ແນວໃດກໍຕາມ ການສຶກສາແມ່ນຍັງໄດ້ສືບຕໍ່ ຢ່າງບໍ່ຢຸດຢັ້ງ:

- ການກັບມາເປີດໂຮງຮຽນຢ່າງປອດໄພ
- ການໂຄສະນາໃຫ້ກັບຄືນສູ່ໂຮງຮຽນ
- ການສືບຕໍ່ການຮຽນຮູ້ ແລະ ການຮຽນຮູ້ທາງໄກ
- ການສິດສອນບຳລຸງ ແລະ ການແກ້ໄຂ ການຮຽນຮູ້ທັນທີ
- ການຊ່ວຍເຫຼືອດ້ານຈິດຕະສັງຄົມ
- ການຫຍໍ້ຫຼັກສູດການສິດສອນ

**ໂຄວິດ-19 ແລະ ສະພາບເສດຖະກິດທີ່ມີຄວາມຫຍຸ້ງຍາກໄດ້ເຮັດໃຫ້:**

- ອັດຕາປະລະການຮຽນເພີ່ມຂຶ້ນ

- ລະດັບຜົນການຮຽນຮູ້ຫຼຸດລົງ

# ການເລັ່ງຟື້ນຟູການຮຽນຮູ້ ຢູ່ ສ ປປ ລາວ
# ຈະຕ້ອງໄດ້ເຮັດຫຍັງແນ່ ?





# 1. ການກຳນົດບູລິມະສິດທີ່ເປັນ ຈຸດສຸມມີດັ່ງນີ້

- **ການຮຽນຮູ້ພື້ນຖານສຳລັບເດັກນ້ອຍທຸກຄົນ** ເພື່ອໃຫ້ໄດ້ຮັບການອ່ານພື້ນຖານ, ຄະນິດສາດ ແລະ ທັກສະທາງດ້ານຈິດຕະສັງຄົມ ໃນຊັ້ນການສຶກສາກ່ອນໄວຮຽນ ແລະ ໃນຊັ້ນປະຖົມສຶກສາຂັ້ນຕົ້ນ (ປ 1 ແລະ ປ 2).
- **ແກ້ໄຂບັນຫາການປະລະການຮຽນ** ເພື່ອຮັບປະກັນໃຫ້ເດັກໄດ້ເຂົ້າ/ຮຽນຕໍ່ໃຫ້ຈົບຊັ້ນການສຶກສາຂັ້ນພື້ນຖານທີ່ມີຄຸນນະພາບ.

# ກຳນົດຍຸດທະສາດສຳລັບການຟື້ນຟູການຮຽນຮູ້

- **ແຜນການຟື້ນຟູການຮຽນຮູ້ແບບຮອບດ້ານ** ແມ່ນມີຄວາມຈຳເປັນເພື່ອຟື້ນຟູການສູນເສຍການຮຽນຮູ້, ຫຼຸດຜ່ອນການປະລະການຮຽນ ແລະ ຫຼຸດຜ່ອນຜົນກະທົບຕໍ່ເດັກ ແລະ ຊາວໜຸ່ມໃນ ສປປ ລາວ.

ຂອບການສຳລັບການຟື້ນຟູການຮຽນຮູ້ (RAPID) ພັດທະນາໂດຍ ອົງການຢູນິເຊັບ, ອົງການ UNESCO, ແລະ ທະນາຄານໂລກ




| | | | | |
|---|---|---|---|---|
| ການເຂົ້າເຖິງເດັກທຸກຄົນ ແລະສະໜັບສະໜູນໃຫ້ເຂົາເຈົ້າຮຽນຈົນຈົບ | ການປະເມີນລະດັບຜົນສຳເລັດຮຽນຂອງນັກຮຽນ | ການຈັດບູລິມະສິດການສອນຂັ້ນພື້ນຖານ. | ເພີ່ມທະວີການຮຽນການສອນບຳລຸງ ແລະ ຜົນການຮຽນທີ່ດີຂື້ນ ເພື່ອເຕີມເຕັມສິ່ງທີ່ໄດ້ສູນເສຍໄປ | ພັດທະນາສຸຂະພາບທາງຈິດໃຈ ແລະ ຄວາມຢູ່ດີກິນດີ ເພື່ອໃຫ້ເດັກທຸກຄົນພ້ອມທີ່ຈະຮຽນຮູ້ |

# 2. ຫຼຸດຜ່ອນຄວາມແຕກໂຕນ ທາງດ້ານການເຂົ້າເຖິງ ດີຈິຕອນ

- ໂຄວິດ-19 ໄດ້ເນັ້ນໃຫ້ເຫັນເຖິງຄວາມສໍາຄັນຂອງ ອຸປະກອນດິຈິຕອນ,
- ເຖິງວ່າເຕັກໂນໂລຊີດິຈິຕອນ ບໍ່ສາມາດປ່ຽນແທນຄູສອນ ໄດ້, ແຕ່ ສາມາດຊ່ວຍໃຫ້ ຄູສອນ ໄດ້ປະຕິບັດໜ້າທີ່ໄດ້ດີ ຂຶ້ນ.
- ເພື່ອໃຫ້ສາມາດນໍາໃຊ້ ເຕັກໂນໂລຊີດັ່ງກ່າວ
  - ພວກເຮົາຈະຕ້ອງໄດ້ປັບປຸງການເຂົ້າເຖິງ ອຸປະກອນດິຈິຕອນ ແລະ ອິນເຕີເນັດ;
  - ປັບປຸງຄວາມສາມາດຂອງຄູ ແລະ ນັກຮຽນ ໃນ ການນໍາໃຊ້ເຕັກໂນໂລຊີດິຈິຕອນເພື່ອການຮຽນຮູ້



# 3. ການຕິດຕາມທີ່ມີປະສິດທິພາບ




ມີຂໍ້ມູນທີ່ດີ ຈະຊ່ວຍໃຫ້ການຕັດສິນໃຈ ແລະ ຄວາມຮັບຜິດຊອບທີ່ດີກວ່າ

ສິ່ງທີ່ຕ້ອງເຮັດປະກອບມີດັ່ງນີ້:

- ເກັບກຳຂໍ້ມູນທີ່ສຳຄັນຕ່າງໆເຊັ່ນ ປັດໄຈນຳເຂົ້າ, ຂະບວນການ ແລະ ຜົນໄດ້ຮັບໃຫ້ເປັນປົກກະຕິ
- ເຊື່ອມຕໍ່ຂໍ້ມູນຈາກຖານຂໍ້ມູນຕ່າງໆທີ່ມີ ແລະ ນຳໃຊ້ສຳລັບການຕັດສິນໃຈ

# 4. ການສະໜອງງົບປະມານໃຫ້ແກ່ຂະແໜງການສຶກສາ

- ການສະໜອງງົບປະມານທີ່ເໝາະສົມ ແມ່ນມີຄວາມສຳຄັນໃນການເລັ່ງການຟື້ນຟູການຮຽນຮູ້ພ້ອມທັງສະໜອງຄູ ແລະ ອຸປະກອນການຮຽນໃຫ້ພຽງພໍ.
- ດັ່ງນັ້ນ, ການເພີ່ມງົບປະມານໃຫ້ແກ່  ຂະແໜງການສຶກສາ ແມ່ນມີຄວາມຈຳເປັນ ເພື່ອໃຫ້ສາມາດບັນລຸໄດ້ ເປົ້າໝາຍການຟື້ນຟູຜົນການຮຽນຮູ້ ຫຼັງຈາກການລະບາດຂອງພະຍາດ

  ໂຄວິດ-19.



ສປປ ລາວ
ກອງປະຊຸມສຸດຍອດ
ຊັບສິນດ້ານມະນຸດ 2023

ລົງທຶນໃສ່ເດັກທຸກຄົນແຕ່ເຍົາໄວ ຢ່າງມີປະສິດທິພາບ

# ຂອບໃຈ